**ມິຊຊາອາທິດທີ 5 ກຳນົດປາສກາ**

**ວັນທີ 2 ພຶດສະພາ 2021**




**ພຣະວໍລະສານໂດຍນັກບຸນຢວງ 15, 1-8**

ເວລາທີ່ພຣະເຢຊູຈາກໂລກເມືອຫາພຣະບິດາໃກ້ຈະມາເຖິງ, ພຣະອົງກ່າວແກ່ພວກລູກສິດວ່າ: "ເຮົາແມ່ນຕົ້ນອະງຸ່ນແທ້ ແລະພຣະບິດາຂອງເຮົາແມ່ນຊາວສວນອະງຸ່ນ. ແໜງໃດໃນເຮົາທີ່ບໍ່ມີໝາກ, ພຣະບິດາກໍຕັດຖິ້ມ. ສ່ວນແໜງທີ່ມີໝາກ, ພຣະອົງກໍຕັດຕອນເພື່ອໃຫ້ມັນມີໝາກຫລາຍກວ່າອີກ. ພວກເຈົ້າບໍລິສຸດແລ້ວ, ຍ້ອນວາຈາທີ່ເຮົາໄດ້ກ່າວກັບພວກເຈົ້າ. ຈົ່ງຢູ່ໃນເຮົາຄືເຮົາຢູ່ໃນພວກເຈົ້າ. ແໜງທີ່ບໍ່ຕິດກັບລຳຕົ້ນ ກໍບໍ່ອາດເກີດໝາກຜົນ; ພວກເຈົ້າກໍຄືກັນ, ຖ້າວ່າບໍ່ຕິດຢູ່ກັບເຮົາ. ເຮົາແມ່ນລຳຕົ້ນອະງຸ່ນ, ພວກເຈົ້າແມ່ນງ່າແໜງ. ຜູ້ໃດຢູ່ໃນເຮົາແລະເຮົາຢູ່ໃນເຂົາ, ຜູ້ນັ້ນກໍຈະເກີດໝາກຫລາຍ. ຍ້ອນວ່າຖ້າບໍ່ມີເຮົາ, ພວກເຈົ້າກໍບໍ່ອາດເຮັດຫຍັງໄດ້ເລີຍ. ຖ້າໃຜບໍ່ຢູ່ໃນເຮົາ ກໍຈະຖືກແກວ່ງຖິ້ມອອກນອກຄືກັນກັບງ່າແໜງອະງຸ່ນ, ແລະຈະຫ່ຽວແຫ້ງໄປ. ເຂົາຈະເກັບກອງໄວ້ເພື່ອເອົາໄປເຜົາໄຟເສຍ. ຖ້າພວກເຈົ້າຢູ່ໃນເຮົາ ແລະວາຈາຂອງເຮົາຢູ່ໃນພວກເຈົ້າແລ້ວ, ພວກເຈົ້າຈົ່ງວອນຂໍທຸກສິ່ງທີ່ຕ້ອງການ, ແລ້ວຈະໄດ້ຮັບ. ເມື່ອພວກເຈົ້າເກີດໝາກຜົນຢ່າງມາກມາຍ, ກໍເປັນກຽດມຸງຄຸນໃຫ້ພຣະບິດາຂອງເຮົາ. ແລະພວກເຈົ້າກໍຈະກາຍເປັນລູກສິດຂອງເຮົາດ້ວຍ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນວັນອາທິດນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງການເປັນສິດທີ່ແທ້ຈິງຂອງພຣະເຢຊູເຈົ້າ ຄືການຕິດສະໜິດສຳພັນເປັນໜຶ່ງດຽວກັບພຣະອົງ.

ດັ່ງໃນບົດອ່ານທີໜຶ່ງຈາກໜັງສືກິດຈະການຂອງພວກອັກຄະທຳມະທູດໄດ້ກ່າວເຖິງເຊົາໂລ. ນາມຊື່ນີ້ແມ່ນນາມຊື່ຂອງນັກບຸນເປົາໂລກ່ອນທີ່ທ່ານໄດ້ກັບໃຈມາເຊື່ອໃນພຣະເຢຊູເຈົ້າແລະເປັນສິດຂອງພຣະອົງ. ຊີວິດຂອງນັກບຸນເປົາໂລແຕ່ກ່ອນ, ທ່ານໄດ້ອົງໃສ່ເຫື່ອແຮງແລະຄວາມສາມາດຂອງຕົນເພື່ອຈັບແລະທຳຮ້າຍຜູ້ທີ່ເຊື່ອໃນພຣະເຢຊູເຈົ້າ. ແຕ່ເມື່ອທ່ານໄດ້ພົບກັບພຣະເຢຊູເຈົ້າແລ້ວ, ຊີວິດຂອງທ່ານກໍໄດ້ປ່ຽນໄປ. ທ່ານບໍ່ໃຊ້ຊີວິດເພື່ອຕົວເອງອີກ, ແຕ່ແມ່ນເພື່ອປະກາດເຖິງພຣະເຢຊູເຈົ້າ. ແລະຊີວິດຂອງທ່ານທີ່ມີຢູ່ນີ້ບໍ່ແມ່ນທ່ານທີ່ມີຊີວິດ ແຕ່ແມ່ນພຣະເຢຊູເຈົ້າທີ່ມີຊີວິດໃນຕົວທ່ານ.

ສ່ວນໃນບົດອ່ານທີສອງ, ນັກບຸນຢວງກໍກ່າວບອກສອນກຸ່ມກຣິສຕະຊົນຂອງທ່ານວ່າ: ຖ້າຜູ້ໃດປະຕິບັດຕາມວາຈາຂອງພຣະເຈົ້າ, ຜູ້ນັ້ນກໍຢູ່ໃນພຣະອົງແລະພຣະອົງກໍຢູ່ໃນຜູ້ນັ້ນດ້ວຍ.

ສ່ວນໃນພຣະວໍລະສານ, ພຣະເຢຊູເຈົ້າກໍກ່າວກັບພວກລູກສິດໂດຍໃຊ້ຮູບພາບຂອງຕົ້ນອະງຸ່ນເພື່ອກ່າວເຖິງຄວາມສະໜິດສຳພັນລະຫວ່າງກິ່ງງ່າກັບລຳຕົ້ນ. ພຣະອົງເປັນລຳຕົ້ນ. ສ່ວນພວກລູກສິດເປັນກິ່ງງ່າ. ຖ້າພວກລູກສິດຕິດສະໜິດກັບພຣະອົງ, ພວກເຂົາກໍຈະມີຊີວິດແລະແມ່ນຊີວິດທີ່ອຸດົມສົມບູນ. ເມື່ອໃດຫາກພວກເຂົາແຍກຈາກພຣະອົງແລ້ວ, ພວກເຂົາກໍຈະຂາດຊີວິດແລະຫ່ຽວແຫ້ງໄປ. ສິ່ງທີ່ທຳໃຫ້ພວກລູກສິດຕິດສະໜິດກັບພຣະອົງນັ້ນແມ່ນການຟັງແລະປະຕິບັດຕາມວາຈາຂອງພຣະອົງ.

ວັນນີ້, ພຣະເຢຊູເຈົ້າກໍກ່າວກັບພວກເຮົາແຕ່ລະຄົນເຊັ່ນດຽວກັນ. ພວກເຮົາເປັນກິ່ງງ່າ. ສ່ວນພຣະອົງເປັນລຳຕົ້ນ.ຖ້າພວກເຮົາຟັງແລະປະຕິບັດຕາມວາຈາຂອງພຣະອົງ, ພວກເຮົາກໍຈະຕິດສະໜິດເປັນໜຶ່ງດຽວກັບພຣະອົງ. ພວກເຮົາຈະຢູ່ໃນພຣະອົງແລະພຣະອົງກໍຈະສະຖິດຢູ່ໃນພວກເຮົາ. ເວລານັ້ນ, ພວກເຮົາຈະສາມາດເວົ້າໄດ້ເໝືອນກັບນັກບຸນເປົາໂລວ່າ: “ບໍ່ແມ່ນຂ້ອຍທີ່ມີຊີວິດ, ແຕ່ແມ່ນພຣະເຢຊູເຈົ້າທີ່ມີຊີວິດໃນຕົວຂ້ອຍ”.

**ພາວະນາ**

ໂອພຣະເຢຊູເຈົ້າ ຜູ້ເປັນບໍ່ເກີດແຫ່ງຊີວິດ, ໂຜດຊ່ວຍລູກໃຫ້ຕິດສະໜິດກັບພຣະອົງຢູ່ສະເໝີ ຜ່ານທາງການປະຕິບັດຕາມວາຈາຂອງພຣະອົງ. ເພື່ອຊີວິດຂອງລູກຈະໄດ້ເກີດດອກອອກຜົນແລະແມ່ນຊີວິດທີ່ໝັ້ນຄົງຖາວອນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ